Department of Social and Health Services

**Developmental Disabilities Administration**

# ການຜັນປ່ຽນຕໍ່ມາໄປຢູ່ເຮືອນໃຫມ່

## ຈະຄາດຫມາຍຫຍັງແລະຜູ້ຈັດການເອກສານຂອງທ່ານສາມາດຊ່ວຍທ່ານໄດ້ແນວໃດ



DSHS WASHINGTON STATE Department of Social and Health Services

DSHS 22-1984 LA (Rev. 9/24) Laotian

# ທ່ານຢາກຈະຢູ່ໃສ?

## ການຍ້າຍໄປຢູ່ເຮືອນໃຫມ່ບໍ່?



ບຸກຄົນໂດຍທົ່ວໄປແລ້ວ ຈະຍ້າຍເຮືອນ




ເທື່ອໃນຕະລອດຊີວິດ ຂອງເຂົາເຈົ້າ



ການຍ້າຍເຮືອນສາມາດເປັນຕຶງຄຽດຫລາຍ!

# ບາງສິ່ງບາງຢ່າງທີ່ເຮັດໃຫ້ການຍ້າຍ ເຮືອນຕຶງຄຽດຫລາຍແມ່ນ:



ການມີສິ່ງທີ່ເຮັດເປັນປະຈຳໃນແຕ່ ລະວັນແນວໃຫມ່.



ການຮຽນຮູ້ວ່າທຸກສິ່ງ ທຸກຢ່າງຢູ່ໃສ.



ການບໍ່ຮູ້ຈັກທຸກໆຄົນ ຜູ້ທີ່ເຮັດວຽກຢູ່ບ່ອນນັ້ນ ຫລືອາສັຍຢູ່ບ່ອນນັ້ນ.



ຜູ້ຈັດການເອກສານ DDA ຂອງທ່ານແມ່ນຢູ່ທີ່ນີ້ເພື່ອຈະຊ່ວຍເຫລືອທ່ານ.ເຂົາເຈົ້າປະຕິບັດຕາມຂັ້ນຕອນເຈາະຈົງເພື່ອຈະໃຫ້ແນ່ໃຈວ່າທ່ານມີສິ່ງທີ່ທ່ານຕ້ອງການ.ພວກເຮົາເອີ້ນອັນນີ້ວ່າແມ່ນການຜັນປ່ຽນຕໍ່ມາ.

ເວົ້ານຳຜູ້ຈັດການເອກສານຂອງທ່ານໃນຂັ້ນເລີ່ມຕົ້ນຂອງການວາງແຜນຜັນປ່ຽນຕໍ່ມາຂອງທ່ານ. ບອກໃຫ້ເຂົາເຈົ້າຮູ້ຈັກວ່າແມ່ນຫຍັງສຳຄັນຕໍ່ທ່ານ.




ແມ່ນຫຍັງສຳຄັນຕໍ່ທ່ານເມື່ອເວລາທ່ານຍ້າຍເຮືອນ?

ຜູ້ຈັດການເອກສານຂອງທ່ານເວົ້ານຳທ່ານກ່ຽວກັບຈຸດມຸ່ງຫມາຍຂອງທ່ານ:




ຈຸດມຸ່ງຫມາຍຂອງທ່ານບາງຢ່າງແມ່ນຫຍັງແດ່?

ຫລັງຈາກທີ່ທ່ານເຊັນຊື່ໃສ່ໃບຟອມຍິນຍອມຜູ້ຈັດການເອກສານຂອງທ່ານຈະແລກປ່ຽນຈຸດມຸ່ງໝາຍແລະຄວາມຕ້ອງການຂອງທ່ານນຳຜູ້ບໍລິການຜູ້ທີ່ສາມາດຊ່ວຍເຫລືອທ່ານ.




ທ່ານຕ້ອງການຢາກໃຫ້ຜູ້ບໍລິການຄົນໃຫມ່ຮູ້ຈັກຫຍັງແດ່ກ່ຽວກັບທ່ານ?

ທ່ານແລະບຸກຄົນຜູ້ທີ່ທ່ານເລືອກເອົາໃຫ້ໄປນຳທ່ານສາມາດຢ້ຽມຢາມເຮືອນທີ່ອາດຈະເປັນໄປໄດ້.ທ່ານສາມາດພົບນຳຜູ້ບໍລິການແລະບຸກຄົນຜູ້ທີ່ເຮັດວຽກຢູ່ບ່ອນນັ້ນ,ແລະເບິ່ງວ່າທ່ານຢາກຈະຢູ່ບ່ອນນັ້ນຫລືບໍ່.



ທ່ານມີບ່ອນໃດບໍ່ທີ່ທ່ານຢາກຈະໄປຢ້ຽມຢາມບໍ່?

ຜູ້ຈັດການເອກສານຂອງທ່ານຈະເຮັດໝາຍນັດພົບການປະຊຸມກັນຕາມປົກກະຕິບາງຢ່າງນຳຄະນະທີມງານປິ່ນປົວຂອງທ່ານເພື່ອຈະເວົ້າລົມສິ່ງທີ່ທ່ານຕ້ອງການກ່ອນທີ່ທ່ານຈະຍ້າຍເຮືອນ.

- ທ່ານອາດຈະຕ້ອງໄດ້ຊອກຫາທ່ານໝໍຄົນໃຫມ່,ທ່ານໝໍແຂ້ວແລະຮ້ານຂາຍຢາກ່ອນທີ່ທ່ານຈະຍ້າຍເຮືອນ.
- ພະນັກງານຄົນໃຫມ່ຂອງທ່ານຈະຕ້ອງການທີ່ຈະຮຽນຮູ້ກ່ຽວກັບວ່າຈະອູ້ມຊູທ່ານໄດ້ແນວໃດ.
- ເຮືອນໃຫມ່ຂອງທ່ານອາດຈະຕ້ອງການອຸບປະກອນບາງຢ່າງເພື່ອຈະຊ່ວຍທ່ານນຳຄວາມຕ້ອງການປະຈຳວັນຂອງທ່ານ.
- ຄະນະທີມງານຈະເວົ້າລົມກັນກ່ຽວກັບວ່າແມ່ນໃຜຈະຂັບຣົດພາທ່ານໄປຫາເຮືອນໃຫມ່ຂອງທ່ານແລະເຮັດໃຫ້ແນ່ໃຈວ່າເຄື່ອງຂອງທ່ານທຸກໆຢ່າງຢູ່ທີ່ນັ້ນແລ້ວ.



**ການປະຊຸມກັນອາດຈະເປັນໂດຍຕົນເອງຫລືຜ່ານທາງອິນເຕີແນດ–ແລະທ່ານຈະຖືກເຊີນມາຮ່ວມ!**

**ຫລືວ່າທ່ານສາມາດເລືອກເອົາທີມທາງອື່ນເພື່ອຈະຖືກເຂົ້າຮ່ວມນຳ–ມັນຂຶ້ນນຳທ່ານ!**




ທ່ານຢາກຈະຖືກລວມຢູ່ໃນການປະຊຸມວາງແຜນຂອງທ່ານແນວໃດ?

ຄະນະທີມງານປິ່ນປົວຂອງທ່ານຈະມີການປະຊຸມເປັນປະຈຳເພື່ອຈະເວົ້າລົມ
ກ່ຽວກັບສິ່ງທີ່ຕ້ອງການທີ່ຈະເກີດຂຶ້ນກ່ອນທີ່ທ່ານຈະຍ້າຍເຮືອນ.

ທ່ານອາດຈະຕ້ອງການທາງຍ່າງຂຶ້ນຫລືອຸປະກອນອື່ນໆເພື່ອຈະໃຫ້ແນ່ໃຈ
ວ່າເຮືອນແມ່ນປອດພັຍ.





ທ່ານອາດຈະຕ້ອງການທ່ານຫມໍຫລືຮ້ານຂາຍຢາໃຫມ່ຖ້າຫາກວ່າເຮືອນໃຫມ່ຂອງທ່ານໄກ
ຫລາຍເກີນໄປຈາກບ່ອນທີ່ທ່ານໄປຕາມປົກກະຕິ.ທ່ານອາດຈະຕ້ອງການການບໍລິການແນວ
ໃຫມ່ຫລືແຕກຕ່າງທີ່ຈະຊ່ວຍເຫລືອທ່ານເຂົ້າຫາຊຸມຊົນຫລືວຽກງານຂອງທ່ານ.









ການບໍລິການແລະຜູ້ບໍລິການແນວໃດທີ່ທ່ານຕ້ອງການທີ່ຈະອູ້ມຊູທ່ານ?

ເມື່ອມັນເຖິງເວລາທີ່ຈະຍ້າຍເຮືອນ,ຄະນະທີມງານປິ່ນປົວຂອງທ່ານຈະວາງແຜນວັນຍ້າຍເຮືອນຂອງທ່ານ.ສິ່ງຂອງຂອງທ່ານທຸກໆຢ່າງຈະຢູ່ທີ່ນັ້ນແລະພະນັກງານຂອງທ່ານຈະຕຽມພ້ອມທີ່ຈະຊ່ວຍເຫລືອທ່ານນຳສິ່ງທີ່ທ່ານຕ້ອງການ.




ຫລັງຈາກທີ່ທ່ານຍ້າຍເຂົ້າ,ຜູ້ຈັດການເອກສານຂອງທ່ານຈະຕິດຕໍ່ຫາທ່ານເພື່ອຈະເບິ່ງວ່າທຸກສິ່ງທຸກຢ່າງເປັນໄປແນວໃດ.ທ່ານມັກຫມູ່ຢູ່ຮ່ວມຫ້ອງຂອງທ່ານບໍ່?ທ່ານຕ້ອງການແນວໃດແນວນຶ່ງບໍ່?ຜູ້ຈັດການເອກສານຂອງທ່ານຈະເບິ່ງນຳທ່ານຢູ່ເລື້ອຍໆເມື່ອເວລາທ່ານຍ້າຍເຂົ້າທຳອິດເພື່ອຈະເຮັດໃຫ້ແນ່ໃຈວ່າທຸກສິ່ງທຸກຢ່າງໄປໄດ້ດີ.



ຫລັງຈາກສອງອາທິດຄະນະທີມງານຂອງທ່ານຈະຕິດຕໍ່ຫາທ່ານ.ຜູ້ຈັດການເອກສານຂອງທ່ານຈະນຳສະເນີທ່ານໃຫ້ພະນັກງານ DDA ອີກຄົນນຶ່ງຜູ້ທີ່ຈະພົບກັບທ່ານແລະຖາມຄຳຖາມສຳຣວດບາງອັນກ່ຽວກັບການບໍຣິການຂອງທ່ານ.

ພາຍໃນ 30 ວັນຫລັງຈາກທີ່ທ່ານຍ້າຍຜູ້ຈັດການເອກສານຂອງທ່ານຈະຢ້ຽມຢາມເພື່ອຈະໃຫ້ແນ່ໃຈວ່າທ່ານມີທຸກສິ່ງທຸກຢ່າງທີ່ທ່ານຕ້ອງການ.ເຂົາເຈົ້າຈະຖາມຜູ້ບໍຣິການຂອງທ່ານເອົາແຜນການປິ່ນປົວຄົບຖ້ວນຂອງທ່ານແລະເກັບຮັກສາໄວ້ຢູ່ໃນບັນທຶກການປະເມີນຜົນ CARE ຂອງທ່ານ.

ປະມານທຸກໆສາມເດືອນຜູ້ຈັດການເອກສານຂອງທ່ານຈະພົບກັບທ່ານສຳລັບປີທຳອິດຫລັງຈາກທີ່ທ່ານຍ້າຍເຮືອນເພື່ອຈະເວົ້າກັນກ່ຽວກັບການບໍຣິການຂອງທ່ານແລະຄວາມຕ້ອງການຂອງທ່ານ.ອັນນີ້ຈະເປັນເວລາດີເພື່ອຈະຖາມຄຳຖາມກ່ຽວກັບການບໍຣິການຂອງທ່ານຫລືບອກຜູ້ຈັດການເອກສານຂອງທ່ານແນວໃດແນວນຶ່ງໃຫມ່.

ຖ້າຫາກວ່າທ່ານມີຄໍາຖາມແນວໃດ,ທ່ານສາມາດຕິດ
ຕໍ່ຫາຜູ້ຈັດການເອກສານຂອງທ່ານໄດ້ໃນທຸກໆເວລາ.

ຫ້ອງການ DDA:
www.dshs.wa.gov/dda/find-dda-office

ແວບໄຊທ໌ເຄືອຄ່າຍອິນເຕີແນດ DDA:
www.dshs.wa.gov/dda

ການບໍລິການຢູ່ຕາມເຮືອນ DDA:
www.youtube.com/playlist?list=
PLb1tUPq5ofBHTtHZD7sIfYCHvbkyVOay8

DSHS
WASHINGTON STATE
Department of Social
and Health Services